ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 1497 /ປທສ

ນະຄອນຫຼວງວຽງຈັນ, ວັນທີ 03 ກັນຍາ 2020

# ຂໍ້ຕົກລົງ

## ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ ເວັບໄຊ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ (ປທສ)

- ອີງຕາມ ກົດໝາຍວ່າດ້ວຍ ເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ ສະບັບເລກທີ 02/ສພຊ, ລົງວັນທີ 07 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ການປົກປ້ອງຂໍ້ມູນເອເລັກໂຕຣນິກ ສະບັບເລກທີ 25/ສພຊ, ລົງວັນທີ 12 ພຶດສະ ພາ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ສະບັບເລກທີ 22/ນຍ, ລົງວັນທີ 16 ມັງກອນ 2017.

## ລັດຖະມົນຕີ ອອກຂໍ້ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ສິດ, ໜ້າທີ່, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ການນຳໃຊ້ເວັບໄຊຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອໃຫ້ມີຄວາມສະດວກ, ວ່ອງໄວ, ປະຢັດເວລາ ແລະ ຮັບປະກັນຄວາມປອດໄພຂອງຂໍ້ມູນ ຊຸກຍູ້ສົ່ງເສີມໃຫ້ການບໍລິການຂໍ້ມູນຂ່າວສານຜ່ານເວັບໄຊຂອງກະຊວງ ປທສ ອອກສູ່ສັງຄົມໃຫ້ກວ້າງຂວາງ.

**ມາດຕາ 2 ເວັບໄຊ ກະຊວງ ປທສ**

ເວັບໄຊ ກະຊວງ ປທສ ເປັນແຫຼ່ງເກັບໂຮມຂໍ້ມູນຂ່າວສານ ແລະ ເອກະສານລັດຖະການຂອງຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນຮູບແບບເອເລັກໂຕຣນິກຜ່ານລະບົບອິນເຕີເນັດ ແລະ ມີຊື່ວ່າ "ເວັບໄຊ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ" ໂດຍມີລະຫັດຊື່ອິນເຕີເນັດແມ່ນ www.mpt.gov.la.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄວາມປອດໄພຂອງເວັບໄຊ (Website Security)** ໝາຍເຖິງ ເວັບໄຊທີ່ມີຄວາມປອດໄພ ໂດຍໄດ້ມີການປົກປ້ອງການໂຈມຕີໃນຮູບແບບຕ່າງໆ ຈາກຜູ້ບໍ່ຫວັງດີ;

2. **ຄວບຄຸມການເຂົ້າເຖິງຂໍ້ມູນ (Access Control)** ໝາຍເຖິງ ຂະບວນການປົກປ້ອງຂໍ້ມູນ ໂດຍການກຳນົດສິດທິ, ການອະນຸຍາດ ແລະ ການເຂົ້າເຖິງເຂົ້າມູນໃນແຕ່ລະຂັ້ນຂອງຜູ້ຄຸ້ມຄອງລະບົບ;

3. **ການເຂົ້າລະຫັດຂໍ້ມູນ (Data Encryption)** ໝາຍເຖິງ ການຮັກສາຄວາມປອດໄພຂອງຂໍ້ມູນໂດຍການເຂົ້າລະຫັດຂໍ້ມູນ ຊຶ່ງເຮັດໃຫ້ບໍ່ສາມາດເຂົ້າໃຈໄດ້ໂດຍບຸກຄົນທົ່ວໄປ;

4. **ການກວດສອບຂໍ້ມູນ (Input Validation)** ໝາຍເຖິງ ຂະບວນການກວດສອບຄວາມຖືກຕ້ອງຂອງຂໍ້ມູນ ກ່ອນການນຳເອົາຂໍ້ມູນເພື່ອໄປຈັດການ ແລະ ປະມວນຜົນ;

5. **ເອັສຄິວແອວ ອິນເຈັກເຊິນ (SQL injection)** ໝາຍເຖິງ ຮູບແບບການໂຈມຕີ ໂດຍໃຊ້ຄຳສັ່ງ SQL ເຂົ້າໄປໃນຊ່ອງໂຫວ່ຂອງໂປແກຣມ ເພື່ອລັກເອົາຂໍ້ມູນຈາກລະບົບຖານຂໍ້ມູນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍຂອງຂໍ້ມູນ;

6. **ຄອສໄຊສະຄຣິບຕິ້ງ (Cross Site Scripting)** ໝາຍເຖິງ ຮູບແບບການໂຈມຕີ ໂດຍໃຊ້ເຕັກນິກການຝັງໂຄດເຂົ້າໄປໃນໜ້າເວັບເພສ໌ ເພື່ອກໍ່ໃຫ້ເກີດຄວາມເສຍຫາຍໃຫ້ກັບຂໍ້ມູນ;

7. **ການສຳຮອງຂໍ້ມູນ (Data Backup)** ໝາຍເຖິງ ການສຳເນົາຂໍ້ມູນ ເພື່ອເກັບສຳຮອງໄວ້ໃນກໍລະນີທີ່ຂໍ້ມູນຫຼັກມີຄວາມເສຍຫາຍ ສາມາດເອົາຂໍ້ມູນທີ່ຖືກສຳເນົາມາເຮັດວຽກແທນໄດ້.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ນຳໃຊ້ເວັບໄຊຂອງ ກະຊວງ ປທສ.

## ໝວດທີ 2
## ອົງປະກອບ

**ມາດຕາ 5 ລະບົບເວັບໄຊກະຊວງ**

ເວັບໄຊກະຊວງ ປທສ ຖືກພັດທະນາໂດຍການນຳໃຊ້ລະບົບເວັບໄຊພາກລັດ (G-Web Platform) ທີ່ມີລະບົບຊ່ວຍໃນການບໍລິຫານ ແລະ ສະແດງຂໍ້ມູນໄດ້ທັງພາສາລາວ ແລະ ອັງກິດ ຊຶ່ງສາມາດຄຸ້ມຄອງ ແລະ ເລືອກນຳໃຊ້ໄດ້ສອງພາສາດັ່ງກ່າວ.

ຜູ້ຊົມໃຊ້ສາມາດຄົ້ນຫາ ໂດຍໃຊ້ຄຳສັບສະເພາະ (keyword) ເພື່ອຊອກຫາຂໍ້ມູນ ທີ່ກ່ຽວຂ້ອງກັບ keyword ນັ້ນ ແລະ ຂໍ້ມູນຂອງເວັບໄຊສາມາດເຂົ້າຫາໄດ້ຜ່ານໂປຣແກຣມເວັບບຣາວເຊີ ທັງໃນໜ້າຈໍຄອມພິວເຕີທົ່ວໄປ, ອຸປະກອນແທັບເລັດ ແລະ ໃນອຸປະກອນມືຖື.

**ມາດຕາ 6** ອົງປະກອບຂອງເວັບໄຊ ກະຊວງ ປທສ

ອົງປະກອບຂອງເວັບໄຊ ກະຊວງ ປທສ ປະກອບມີ 5 ພາກສ່ວນ ດັ່ງນີ້:

1. ແບນເນີ້ (Banner);
2. ເມນູ (Menu);
3. ເນື້ອຫາດ້ານຂວາ (Right Content);
4. ໜ້າຫຼັກ (Home Page);
5. ສ່ວນລຸ່ມສຸດຂອງເວັບໄຊ (Page Footer).

**ມາດຕາ 7** ແບນເນີ້ (Banner)

ແບນເນີ້ (Banner) ເປັນສ່ວນທີ່ສະແດງເຖິງສະຖານທີ່ຕັ້ງ, ຊື່ ແລະ ໂລໂກ້ ຂອງກະຊວງ ປທສ ເພື່ອໃຫ້ຮູ້ວ່າເປັນເວັບໄຊ ຂອງກະຊວງ ປທສ.

**ມາດຕາ 8** ເມນູ (Menu)

ເມນູ (Menu) ເວັບໄຊ ກະຊວງ ປທສ ປະກອບມີ 7 ລາຍການ ດັ່ງນີ້:

1. **ການເຄື່ອນໄຫວ:** ເພື່ອສະແດງຂ່າວ ແລະ ເຫດການເຄື່ອນໄຫວຕ່າງໆ ຂອງຄະນະນຳ ແລະ ບັນດາກົມ/ທຽບເທົ່າຂອງກະຊວງ ປທສ;

2. **ເອກະສານເຜີຍແຜ່:** ລວມມີກົດໝາຍ, ດຳລັດ, ຂໍ້ຕົກລົງ, ແຈ້ງການ, ເອກະສານກອງປະຊຸມປະຈຳປີ ແລະ ເອກະສານເຜີຍແຜ່ອື່ນໆ ທີ່ຕິດພັນກັບກະຊວງ ຫຼື ອົງການຈັດຕັ້ງລັດໃດໜຶ່ງ ທີ່ເປັນຂໍ້ມູນ ແລະ ຜົນປະໂຫຍດໃຫ້ແກ່ພະນັກງານຂອງກະຊວງ ແລະ ທົ່ວສັງຄົມ ທັງພາຍໃນ ແລະ ຕ່າງປະເທດ;

3. **ຄັງຄວາມຮູ້:** ລວມມີຄວາມຮູ້ທົ່ວໄປ ແລະ ບົດນຳສະເໜີຕ່າງໆ ທັງຈາກພາຍໃນ ແລະ ຕ່າງປະເທດເພື່ອສ້າງເປັນແຫຼ່ງຄວາມຮູ້ໃຫ້ແກ່ພະນັກງານ ແລະ ລັດຖະກອນ;

4. **ການບໍລິການ:** ເພື່ອເຂົ້າຫາການບໍລິການອື່ນໆ ຂອງກະຊວງ ເປັນຕົ້ນ ການບໍລິການຂໍຈົດທະບຽນການສ້າງຕັ້ງບໍລິສັດ ໄອຊີທີ, ບໍລິການຈົດລະຫັດຊື່ອິນເຕີເນັດ, ການບໍລິການລະບົບກອງປະຊຸມທາງໄກ, ລະບົບອີເມວຂອງພາກລັດ ແລະ ອື່ນໆ;

5. **ຮັບແຈ້ງຄຳຕິຊົມ:** ເພື່ອເປັນບ່ອນຮັບຄຳຕຳນິຕິຊົມຈາກຜູ້ຊົມໃຊ້ ບໍ່ວ່າຈະເປັນຕໍ່ກັບເວັບໄຊ ຫຼື ຕໍ່ກັບການບໍລິການຂອງກະຊວງ;

6. **ກ່ຽວກັບກະຊວງ:** ເພື່ອສະແດງ ແລະ ເຜີຍແຜ່ຂໍ້ມູນກ່ຽວກັບ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເຊັ່ນ: ພາລະບົດບາດ, ໂຄງຮ່າງການຈັດຕັ້ງ, ການຮ່ວມມືສາກົນ ແລະ ອື່ນໆ;

7. **ເຊື່ອມໂຍງເວັບໄຊ:** ເພື່ອໃຫ້ສາມາດກົດເຂົ້າຫາເວັບໄຊຂອງພາກສ່ວນຕ່າງໆ ທັງພາຍໃນກະຊວງ, ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນຫຼວງ ແລະ ເວັບໄຊອື່ນໆ.

**ມາດຕາ 9 ເນື້ອຫາດ້ານຂວາ (Right Content)**

ເນື້ອຫາດ້ານຂວາ (Right Content) ເປັນສ່ວນທີ່ສະແດງຂໍ້ມູນ ແລະ ເນື້ອຫາຕ່າງໆ ທີ່ສຳຄັນ ແລະ ຕ້ອງການສະແດງໃຫ້ຜູ້ໃຊ້ສາມາດເຫັນໄດ້ງ່າຍ ເຊັ່ນ: ສະຖິຕິຂະແໜງປທສ, ວິໄສທັດ, ແຜນຍຸດທະສາດ ແລະ ແຜນການ 5 ປີ, ວາລະສານ ໄອຊີທີ ແລະ ການເຂົ້າຫາລະບົບໂດຍຜ່ານໜ້າເວັບ.

**ມາດຕາ 10 ໜ້າຫຼັກ (Home Page)**

ໜ້າຫຼັກ (Home Page) ເປັນສ່ວນທີ່ເຂົ້າຫາຂໍ້ມູນໃນໝວດຕ່າງໆ ເທິງໜ້າທຳອິດທີ່ມີການເຂົ້າຫາເວັບໄຊ ເຊັ່ນ: ຂ່າວການ ເຄື່ອນໄຫວຕ່າງໆ, ການບໍລິການ, ເອກະສານເຜີຍແຜ່ ແລະ ຄັງຄວາມຮູ້.

**ມາດຕາ 11 ສ່ວນລຸ່ມສຸດຂອງເວັບໄຊ ( Page Footer)**

ສ່ວນລຸ່ມສຸດຂອງເວັບໄຊ (Page Footer) ເປັນສ່ວນທີ່ສະແດງຂໍ້ມູນຕ່າງໆ ເຊັ່ນ: ກັບຄືນຫາໜ້າຫຼັກ (Home Page) ໃນຮູບແບບຂໍ້ຄວາມ, ຂໍ້ມູນຕິດຕໍ່ ເຊັ່ນ: ຊື່, ທີ່ຢູ່, ໝາຍເລກໂທລະສັບ, ແຟັກ, ທີ່ຢູ່ອີເມວ ແລະ ຄຳສະຫງວນລິຂະສິດ (Copyright).

## ໝວດທີ 3
## ການຄຸ້ມຄອງ ແລະ ການນຳໃຊ້ເວັບໄຊ

**ມາດຕາ 12 ການຄຸ້ມຄອງລະບົບເຕັກນິກ**

ການຄຸ້ມຄອງລະບົບເຕັກນິກ ເວັບໄຊ ແບ່ງອອກເປັນ 2 ຂັ້ນ ຄື:

1. ຜູ້ຄຸ້ມຄອງລະບົບທັງໝົດ ແມ່ນເປັນເຈົ້າການໃນການການສະໜອງ, ຕິດຕັ້ງ, ສ້າງ ແລະ ຈັດການລະບົບ, ກຳນົດສິດຂອງການເຂົ້າຫາ ແລະ ນຳໃຊ້;

2. ຜູ້ປ້ອນຂໍ້ມູນ ແມ່ນການເອົາຂໍ້ມູນຂຶ້ນເວັບໄຊ ຊຶ່ງຂອບເຂດຂອງການເຂົ້ານຳໃຊ້ ແລະ ປ້ອນຂໍ້ມູນແມ່ນຕາມການຈັດແບ່ງຂອງຜູ້ຄຸ້ມຄອງລະບົບ.

**ມາດຕາ 13 ການສ້າງບັນຊີຜູ້ນຳໃຊ້ ແລະ ລະຫັດຜ່ານ**

ຜູ້ຄຸ້ມຄອງລະບົບຈະເປັນຜູ້ສ້າງບັນຊີຜູ້ນຳໃຊ້ ແລະ ລະຫັດຜ່ານ ໃຫ້ແກ່ບັນດາກົມ/ທຽບເທົ່າພາຍໃນກະຊວງ ປທສ ພ້ອມທັງກຳນົດຂອບເຂດໃນການເຂົ້າຫາ ແລະ ຈັດການກັບຂໍ້ມູນໃນແຕ່ລະໝວດຕາມຄວາມເໝາະສົມ.

**ມາດຕາ 14 ການເຊື່ອມຕໍ່ ແລະ ເຂົ້ານຳໃຊ້**

ລະບົບເວັບໄຊ ສາມາດຮອງຮັບການເຂົ້ານຳໃຊ້ ໂດຍຜ່ານເວັບບຣາວເຊີຕ່າງໆ ທັງແບບຄອມພິວເຕີ, ອຸປະກອນແທັບເລັດ ແລະ ໂທລະສັບມືຖື.

ການນຳໃຊ້ລະບົບເວັບໄຊ ສາມາດເຊື່ອມຕໍ່ຜ່ານເຄືອຂ່າຍອິນທຣາເນັດ (Intranet) ຫຼື ອິນເຕີເນັດ (Internet) ຕາມການກຳນົດເງື່ອນໄຂການນຳໃຊ້.

**ມາດຕາ 15 ຂໍ້ມູນຂ່າວສານ ແລະ ເອກະສານທີ່ຈະເອົາຂຶ້ນເວັບໄຊ**

ຂໍ້ມູນຂ່າວສານ ແລະ ເອກະສານທີ່ເອົາຂຶ້ນເວັບໄຊ ຂອງກະຊວງ ປທສ ປະກອບດ້ວຍ:

1. ບົດຂ່າວ ແລະ ຮູບພາບສໍາລັບ ການເຄື່ອນໄຫວຂອງຄະນະນໍາກະຊວງ, ຫ້ອງການ, ບັນດາກົມ/ທຽບເທົ່າພາຍໃນກະຊວງ ແລະ ພະແນກ ປທສ ແຂວງ, ນະຄອນຫຼວງ ແລະ ຫ້ອງການ ປທສ ເມືອງ ລວມທັງບົດຂ່າວກອງປະຊຸມ, ສໍາມະນາດ້ານວິຊາການ, ວຽກງານ ປທສ ຕິດພັນກັບວຽກງານສາມສ້າງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ;

2. ບັນດາເອກະສານເຜີຍແຜ່ນິຕິກໍາຕ່າງໆ ເຊັ່ນ: ກົດໝາຍ, ດໍາລັດ, ຂໍ້ຕົກລົງ, ແຈ້ງການ ແລະ ອື່ນໆ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

3. ການບໍລິການປະກອບດ້ວຍການບໍລິການຜະລິດຕະພັນຕ່າງໆ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງ ໄປສະນີ,ໂທລະຄົມມະນາຄົມ ແລະ ການສື່ສານ;

4. ຂໍ້ມູນກ່ຽວກັບກະຊວງ ປທສ ເຊັ່ນ: ພາລະບົດບາດ, ໂຄງຮ່າງການຈັດຕັ້ງ, ການຮ່ວມມືສາກົນ ແລະ ຂໍ້ມູນຕິດຕໍ່;

5. ສະຖິຕິວຽກງານຕ່າງໆຂອງຂະແໜງ ປທສ, ແຜນຍຸດທະສາດ, ວິໄສທັດ, ແຜນພັດທະນາ ແລະ ແຜນວຽກປະຈໍາປີ;

6. ຮູບແບບຂອງຂໍ້ມູນປະກອບດ້ວຍ ຂໍ້ມູນຮູບແບບເອກະສານ, ສຽງ, ຮູບພາບເຄື່ອນໄຫວ, ວິດີໂອ ທີ່ໄດ້ຮັບອະນຸຍາດໃຫ້ສາມາດເຜີຍແຜ່ໄດ້.

**ມາດຕາ 16 ວິທີການສົ່ງ ແລະ ເອົາຂໍ້ມູນຂຶ້ນເວັບໄຊ**

ບັນດາກົມ/ທຽບເທົ່າພາຍໃນ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ທີ່ຈະເອົາຂ່າວການເຄື່ອນໄຫວຂຶ້ນເວັບໄຊ ຕ້ອງສົ່ງໄປທີ່ຫ້ອງການກະຊວງ, ພະແນກ ປະຊາສໍາພັນ ດ້ວຍວິທີການສົ່ງເອກະສານຜ່ານທາງເອເລັກໂຕຣນິກທີ່ເປັນຟາຍ Word ຫຼື PDF ເພື່ອດໍາເນີນການກວດແກ້ກ່ອນການເຜີຍແຜ່ລົງເວັບໄຊ. ສ່ວນເອກະສານທາງການຕ້ອງສະແກນກ່ອນ, ພ້ອມດ້ວຍຟາຍ word ທີ່ມີເນື້ອໃນ ແລະ ໄດ້ຮັບຄໍາເຫັນດີຈາກຫົວໜ້າຂອງພາກສ່ວນນັ້ນໆ ທີ່ມີຕາປະທັບພ້ອມທັງລົງລາຍເຊັນ ແລະ ສ້າງເອກະສານສະເໜີ ເພື່ອຂໍໃຫ້ນໍາຂໍ້ມູນຂ່າວສານຂຶ້ນເວັບໄຊ ກະຊວງ ປທສ ໂດຍມີລາຍລະອຽດ ດັ່ງນີ້:

1. ຂໍ້ມູນເອກະສານທີ່ຈະອັບໂຫຼດຂຶ້ນເວັບໄຊທີ່ເປັນຟາຍ PDF ຕ້ອງນໍາໃຊ້ຟອນ Phetsarath OT ເທົ່ານັ້ນ;

2. ຂໍ້ມູນທີ່ຈະອັບໂຫຼດຂຶ້ນເວັບໄຊທີ່ເປັນພາສາລາວ ຕ້ອງນໍາໃຊ້ຟອນທີ່ເປັນ Unicode;

3. ການສົ່ງຂໍ້ມູນອັບໂຫຼດຂຶ້ນເວັບໄຊທີ່ເປັນຮູບພາບ ຕ້ອງໃຫ້ເປັນຟາຍ JPG, PNG, GIF ເທົ່ານັ້ນ ແລະ ຊື່ຮູບຕ້ອງໃຫ້ສອດຄ່ອງກັບຫົວຂໍ້ທີ່ຕ້ອງການອັບໂຫຼດ;

4. ການສົ່ງຂໍ້ມູນອັບໂຫຼດຂຶ້ນເວັບໄຊແຕ່ລະຟາຍ ໂດຍທົ່ວໄປແມ່ນບໍ່ໃຫ້ກາຍ 20 Mb;

5. ເອກະສານທີ່ຕ້ອງການໃຫ້ດາວໂຫຼດ ແມ່ນໃຫ້ແນບເອກະສານມາພ້ອມ ແລະ ລະບຸຈຸດຂອງ link ທີ່ຕ້ອງການໃຫ້ດາວໂຫຼດໃຫ້ຄົບຖ້ວນສົມບູນ;

6. ກໍລະນີ ເອກະສານທີ່ຕ້ອງການໃຫ້ມີ link ດາວໂຫຼດຈາກພາກສ່ວນອື່ນ ແມ່ນໃຫ້ແນບ link ມາພ້ອມເອກະສານທີ່ຈະອັບໂຫຼດໃຫ້ຄົບຖ້ວນສົມບູນ;

7. ບັນດາກົມ/ທຽບເທົ່າພາຍໃນກະຊວງ ປທສ ທີ່ຕ້ອງການນຳເອກະສານ ຫຼື ຂໍ້ມູນຂອງຕົນຂຶ້ນເວັບໄຊ ແຕ່ລະຄັ້ງຕ້ອງເຮັດໜັງສືສະເໜີ ໂດຍໃຫ້ມີລາຍເຊັນ ແລະ ຕາປະທັບໃຫ້ຄົບຖ້ວນສົມບູນ ເພື່ອເປັນບ່ອນອີງ ແລະ ຢັ້ງຢືນ ໃນການເຜີຍແຜ່ເອກະສານ ຫຼື ຂໍ້ມູນດັ່ງກ່າວ ແລ້ວສົ່ງໃຫ້ພາກສ່ວນຮັບຜິດຊອບເພື່ອເອົາຂຶ້ນເວັບໄຊ;

8. ການສົ່ງເອກະສານເພື່ອອັບໂຫຼດຂຶ້ນເວັບໄຊ ຂອງບັນດາກົມ/ທຽບເທົ່າພາຍໃນກະຊວງ ປທສ ຕ້ອງສົ່ງຜ່ານລະບົບເອເລັກໂຕຣນິກຂອງ ກະຊວງ ຫຼື ຜ່ານລະບົບຫ້ອງການທັນສະໄໝເທົ່ານັ້ນ;

9. ກໍລະນີ ລະບົບທີ່ທາງກະຊວງນຳໃຊ້ໃນການຮັບຂໍ້ມູນ ແລະ ເອກະສານຈາກບັນດາກົມ/ທຽບເທົ່າ ບໍ່ສາມາດຮັບສົ່ງເອກະສານໄດ້ ຜູ້ສົ່ງຂໍ້ມູນຂ່າວສານ ສາມາດປະສານຫາຜູ້ຄຸ້ມຄອງ ຫຼື ຫ້ອງການກະຊວງ ເພື່ອຂໍຊ່ອງທາງອື່ນໃນການສົ່ງຂໍ້ມູນເພື່ອອັບໂຫຼດຂຶ້ນເວັບໄຊ.

**ມາດຕາ 17 ການຮັກສາຄວາມປອດໄພຂອງລະບົບເວັບໄຊ**

ການຮັກສາຄວາມປອດໄພຂອງລະບົບເວັບໄຊ ມີ ດັ່ງນີ້:

1. ມີລະບົບຄວບຄຸມການເຂົ້າເຖິງຂໍ້ມູນ(Access Control) ເພື່ອກຳນົດສິດໃນການເຂົ້ານຳໃຊ້, ແກ້ໄຂ ແລະ ລຶບຂໍ້ມູນຕ່າງໆ;

2. ມີລະບົບການຢັ້ງຢືນຕົວຕົນໃນການເຂົ້າໃຊ້ຂໍ້ມູນ(Authorized) ເພື່ອພິສູດຕົວຕົນວ່າ ບຸກຄົນດັ່ງກ່າວມີຕົວຕົນທີ່ແທ້ຈິງ ຈຶ່ງສາມາດເຂົ້າໄປນຳໃຊ້ຂໍ້ມູນໄດ້ ຊຶ່ງການຢັ້ງຢືນຕົວຕົນປະກອບດ້ວຍການກຳນົດຊື່ ແລະ ລະຫັດຜ່ານໃນການເຂົ້າລະບົບ ຫຼື ການໃຊ້ Physiological Biometrics;

3. ມີລະບົບການເຂົ້າລະຫັດຂໍ້ມູນ (Data Encryption) ໃນການຮັກສາຄວາມປອດໄພຂອງຂໍ້ມູນ (Data Security Solutions) ຊຶ່ງປ້ອງກັນການເຂົ້າເຖິງຂໍ້ມູນດ້ວຍການເຂົ້າລະຫັດ(Encryption) ທີ່ເຮັດໃຫ້ຂໍ້ມູນນັ້ນເປັນຄວາມລັບສຳລັບຜູ້ທີ່ມີສິດເທົ່ານັ້ນ ຈຶ່ງສາມາດອ່ານຂໍ້ມູນນັ້ນໄດ້ໂດຍການຖອດລະຫັດ(Encryption) ແລະ ເຮັດໃຫ້ຂໍ້ມູນນັ້ນກັບມາໃນຮູບແບບທີ່ສາມາດໃຊ້ງານໄດ້;

4. ມີລະບົບການກວດສອບຂໍ້ມູນ (Input Validation) ໃນການກັ່ນຕອງຂໍ້ມູນ ກ່ອນທີ່ຈະນຳເອົາຂໍ້ມູນເຂົ້າໄປຈັດເກັບໃຫ້ຖືກຕ້ອງສົມບູນ ແລະ ດັກຈັບເອົາການປ້ອນຂໍ້ມູນ ເພື່ອເຂົ້າໄປທຳລາຍຂໍ້ມູນໃນລະບົບ ໃນຮູບແບບຕ່າງໆ ເຊັ່ນ: SQL injection, Cross site Scripting , Cross Site Script Forgery ແລະ ອື່ນໆ;

5. ມີລະບົບການສຳຮອງຂໍ້ມູນ (Data Backup) ໃນການສຳຮອງຂໍ້ມູນເນື້ອໃນຂອງເວັບໄຊ ເພື່ອປ້ອງກັນກໍລະນີການເສຍຫາຍຂອງຂໍ້ມູນ ບໍ່ວ່າຈະຕັ້ງໃຈ ຫຼື ບໍ່ຕັ້ງໃຈລຶບ ຊຶ່ງສາມາດກູ້ຂໍ້ມູນຄືນໄດ້ຈາກຂໍ້ມູນທີ່ພວກເຮົາສຳຮອງໄວ້ຈາກອຸປະກອນເກັບຮັກສາຂໍ້ມູນອື່ນແທນໄດ້;

6. ມີລະບົບການເກັບຮັກສາຂໍ້ມູນທີ່ໄດ້ມາດຕະຖານສາກົນ ຊຶ່ງລະບົບເວັບໄຊ ແມ່ນຕິດຕັ້ງໄວ້ທີ່ສູນຂໍ້ມູນແຫ່ງຊາດ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

7. ມີລະບົບ ແລະ ໜ່ວຍງານຮັບຜິດຊອບກວດຊ່ອງໂວ່ຂອງເວັບໄຊເປັນປະຈຳ ຊຶ່ງຍາກຕໍ່ການເຈາະເຂົ້າລະບົບ.

**ມາດຕາ 18 ຄວາມປອດໄພຂອງເວັບໄຊ**

ຄວາມປອດໄພເວັບໄຊ (Website Security) ເປັນສິ່ງທີ່ສຳຄັນທີ່ສຸດໃນການຮັກສາຄວາມປອດໄພ ແລະ ໝັ້ນຄົງຂອງຂໍ້ມູນໃນເວັບໄຊ ເພື່ອໃຫ້ຜູ້ໃຊ້ບໍລິການເວັບໄຊມີຄວາມໝັ້ນໃຈ ແລະ ເຊື່ອໝັ້ນ ໃນການເຮັດທຸລະກຳທາງເອເລັກໂຕຣນິກເທິງເວັບໄຊ. ໃນການໃຫ້ບໍລິການ ຕ້ອງເຮັດໃຫ້ຜູ້ໃຊ້ບໍລິການແນ່ໃຈວ່າຂໍ້ມູນຂອງຜູ້ໃຊ້ບໍລິການຈະໄດ້ຮັບການຄຸ້ມຄອງເປັນຢ່າງດີ ແລະ ມີຄວາມປອດໄພສູງສຸດ.

**ມາດຕາ 19 ການບຳລຸງຮັກສາເວັບໄຊ**

ລະບົບເຊີເວີ, ຖານຂໍ້ມູນ ແລະ ຊອບແວຂອງລະບົບເວັບໄຊ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຕ້ອງມີການບຳລຸງຮັກສາເປັນປົກກະຕິແຕ່ລະໄລຍະ ຫຼື ເມື່ອມີຄວາມຈຳເປັນ ເປັນຕົ້ນ ການສ້ອມແປງ, ແກ້ໄຂ, ແລະ ອັບເດດ ຊຶ່ງຈະໄດ້ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຮູ້.

## ໝວດທີ 4
## ສິດ,ພັນທະ ແລະ ໜ້າທີ່

**ມາດຕາ 20 ສິດ, ພັນທະ ແລະ ໜ້າທີ່ ຂອງຜູ້ນຳໃຊ້**

ຜູ້ໃຊ້ບໍລິການ ເວັບໄຊ ມີສິດ, ພັນທະ ແລະ ໜ້າທີ່ ດັ່ງນີ້:

1. ໄດ້ຮັບຂໍ້ມູນ ແລະ ການບໍລິການທີ່ມີຄຸນນະພາບ, ສະດວກ, ວ່ອງໄວ ແລະ ປອດໄພຕາມຫຼັກການຂອງການຄຸ້ມຄອງ ແລະ ໃຫ້ບໍລິການ;

2. ເຜີຍແຜ່ຂໍ້ມູນ ແລະ ເອກະສານຕ່າງໆ ທີ່ມີໃນເວັບໄຊໄດ້;

3. ມີສິດປະກອບຄຳຄິດເຫັນໃນໜ້າຮັບແຈ້ງຄຳຕິຊົມ;

4. ຮັບຜິດຊອບຕໍ່ຜົນເສຍຫາຍທີ່ໄດ້ລະເມີດຂໍ້ຫ້າມ ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງຜູ້ປ້ອນຂໍ້ມູນ**

ຜູ້ອັບເດດຂໍ້ມູນຂຶ້ນເວັບໄຊ ປະກອບມີ 2 ພາກສ່ວນຄື: ຫ້ອງການກະຊວງ ແລະ ບັນດາກົມ/ທຽບເທົ່າ ຊຶ່ງມີສິດ ແລະ ໜ້າທີ່ ດັ່ງນີ້:

- **ສິດ ແລະ ໜ້າທີ່ຂອງຫ້ອງການກະຊວງ:**

1. ມີໜ້າທີ່ປ້ອນຂໍ້ມູນຂ່າວການເຄື່ອນໄຫວຂອງຄະນະນຳກະຊວງ ແລະ ບັນດາກົມ/ທຽບເທົ່າ ແລະ ເພີ່ມລິ້ງການເຊື່ອມໂຍງເວັບໄຊຂອງບັນດາກົມ/ທຽບເທົ່າ ຕາມການສະເໜີຂຶ້ນເວັບໄຊ.

2. ປົກປ້ອງຂໍ້ມູນ ແລະ ປະຕິບັດຕາມພັນທະ, ນະໂຍບາຍ, ດຳລັດ ແລະ ລະບຽບຫຼັກການທີ່ກ່ຽວຂ້ອງ;

3. ແກ້ໄຂຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ ແລະ ແກ້ໄຂຂ່າວສານຂຶ້ນເວັບໄຊໃໝ່;

4. ຮັກສາສິດການນຳໃຊ້ ແລະ ແບ່ງປັນໜ້າວຽກໃນການຄຸ້ມຄອງໃຫ້ຖືກຕ້ອງຕາມການມອບໝາຍ;

- **ສິດ ແລະ ໜ້າທີ່ຂອງບັນດາກົມ,ທຽບເທົ່າ:**

1. ມີໜ້າທີ່ສະເໜີ ແລະ ຂໍເພີ່ມຂ່າວການເຄື່ອນໄຫວຂອງຕົນ ແລະ ຂໍເພີ່ມລິ້ງການເຊື່ອມໂຍງເວັບໄຊຂອງບັນດາກົມ/ທຽບເທົ່າ ຕາມການສະເໜີຂຶ້ນເວັບໄຊ.

2. ປ້ອນຂໍ້ມູນຂ່າວສານ ແລະ ເອກະສານທີ່ຕິດພັນກັບສິດ ແລະ ພາລະບົດບາດຂອງຕົນ ເຂົ້າໃນເວັບໄຊ ໃນສ່ວນການບໍລິການ, ເອກະສານເຜີຍແຜ່ ແລະ ຄັງຄວາມຮູ້ ຕາມການຈັດແບ່ງສິດຂອງຜູ້ຄຸ້ມຄອງລະບົບເວັບໄຊ;

3. ປົກປ້ອງຂໍ້ມູນ ແລະ ປະຕິບັດຕາມພັນທະ, ນະໂຍບາຍ, ດຳລັດ ແລະ ລະບຽບຫຼັກການທີ່ກ່ຽວຂ້ອງ;

4. ແກ້ໄຂຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ ແລະ ແກ້ໄຂຂ່າວສານຂຶ້ນເວັບໄຊໃໝ່;

5. ຮັກສາສິດການນຳໃຊ້ ແລະ ແບ່ງປັນໜ້າວຽກໃນການຄຸ້ມຄອງໃຫ້ຖືກຕ້ອງຕາມການມອບໝາຍ;

**ມາດຕາ 22 ສິດ ແລະ ໜ້າທີ່ຂອງຜູ້ຄຸ້ມຄອງເວັບໄຊ**

ຜູ້ຄຸ້ມຄອງຫຼັກລະບົບເວັບໄຊມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜູ້ຄຸ້ມຄອງຫຼັກລະບົບເວັບໄຊ ມີໜ້າທີ່ຮັບຜິດຊອບຕໍ່ຈຸດປະສົງການນຳໃຊ້ຕາມພັນທະ, ນະໂຍບາຍ, ດຳລັດ ແລະ ລະບຽບຫຼັກການທີ່ກ່ຽວຂ້ອງ;

2. ສ້າງ, ແກ້ໄຂ ແລະ ລຶບ ລາຍຊື່ຜູ້ຄຸ້ມຄອງປັບປຸງຂໍ້ມູນ ຫຼື ລາຍຊື່ຜູ້ຄຸ້ມຄອງຫຼັກຂອງລະບົບທີ່ມີ ຕາມການມອບໝາຍ ຫຼື ການສະເໜີ;

3. ສ້າງ, ແກ້ໄຂ, ປິດ ຫຼື ລຶບ ບັບດາເມນູ, ແບນເນີ້ (Banner) ແລະ ເນື້ອຫາທາງດ້ານຂວາ;

4. ສ້າງ, ແກ້ໄຂ, ປ່ຽນແປງເວັບໄຊໃຫ້ເປັນໄປຕາມທິດຊີ້ນຳ ຫຼື ຮູບແບບທີ່ຕ້ອງການຕາມການມອບໝາຍ;

5. ຮັກສາສິດການນຳໃຊ້ ແລະ ແບ່ງປັນໜ້າວຽກໃນການຄຸ້ມຄອງໃຫ້ຖືກຕາມການມອບໝາຍ;

6. ຮັບຜິດຊອບຕໍ່ການຄຸ້ມຄອງ, ສ້າງ, ແກ້ໄຂ ແລະ ລຶບ ຂໍ້ມູນເອກະສານຕ່າງໆພາຍໃນເວັບໄຊ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 23 ຂໍ້ຫ້າມສຳລັບຜູ້ນຳໃຊ້**

ຫ້າມຜູ້ນຳໃຊ້ເວັບໄຊ ກະຊວງ ປທສ ມີພຶດຕິກຳ ດັ່ງນີ້:

1. ເຜີຍແຜ່ຂໍ້ມູນທີ່ບໍ່ເປັນຄວາມຈິງ, ຫຼອກລວງ ຫຼື ບິດເບືອນຈາກເວັບໄຊ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

2. ແກ້ໄຂ ຫຼື ຕັດຕໍ່ຂໍ້ມູນຈາກເວັບໄຊໄປເຜີຍແຜ່ ເຮັດໃຫ້ເກີດຄວາມເສຍຫາຍຕໍ່ເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ຮີດຄອງອັນດີງາມ ແລະ ຄວາມໝັ້ນຄົງຂອງປະເທດຊາດ;

3. ນຳເອົາຂໍ້ມູນໄປສ້າງຄວາມເສຍຫາຍ ແລະ ໃສ່ຮ້າຍປ້າຍສີ ສ້າງຄວາມເຊື່ອມເສຍກຽດຕິຍົດ ແລະ ຜົນປະໂຫຍດ ຕໍ່ກັບບຸກຄົນ ນິຕິບຸກຄົນ, ອົງການຈັດຕັ້ງ ແລະ ປະເທດຊາດ;

4. ນຳເອົາຂໍ້ມູນໄປເສີມສ້າງ ຫຼື ຜັນຂະຫຍາຍ ເພື່ອສ້າງຜົນປະໂຫຍດໃຫ້ແກ່ພາກສ່ວນຂອງຕົນທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

**ມາດຕາ 24 ຂໍ້ຫ້າມສໍາລັບຜູ້ປ້ອນຂໍ້ມູນ ແລະ ຜູ້ຄຸ້ມຄອງເວັບໄຊ**

ຫ້າມຜູ້ຄຸ້ມຄອງອັບເດດຂໍ້ມູນ ແລະ ຜູ້ຄຸ້ມຄອງເວັບໄຊ ມີພຶດຕິກໍາ ດັ່ງນີ້:

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງຜູ້ໃຊ້ເວັບໄຊ ໂດຍບໍ່ໄດ້ຮັບອະນຸຍາດ ເຊັ່ນ: ລະຫັດຊື່, ລະຫັດຜ່ານ ແລະ ອື່ນໆ;

2. ສ້າງ ແລະ ດັດແປງສິດທິ ໃນການເຂົ້າເຖິງເວັບໄຊຂອງຜູ້ນໍາໃຊ້ເວັບໄຊ ໂດຍບໍ່ໄດ້ຮັບອະນຸຍາດ;

3. ສ້າງ ແລະ ດັດແປງ ເນື້ອໃນຂອງເວັບໄຊທີ່ຕົນເອງຄຸ້ມຄອງ ໂດຍບໍ່ໄດ້ຮັບອະນຸຍາດ;

4. ສ້າງເງື່ອນໄຂ ແລະ ອະນຸຍາດ ໃຫ້ກັບບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ເພື່ອອໍານວຍຄວາມສະດວກ ໃນການເຜີຍແຜ່ຂໍ້ມູນທີ່ມີແນວທາງໃນການຕໍ່ຕ້ານນະໂຍບາຍຂອງພັກ-ລັດ, ກົດໝາຍ, ມີຜົນກະທົບຕໍ່ວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ, ຮູບພາບເໜັງຕີງ-ບໍ່ເໜັງຕີງ, ສຽງ ແລະ ວິດີໂອ ທີ່ເປັນລາມົກອານາຈານ ແລະ ໃຫ້ບໍລິການຊື້ຂາຍທາງເພດ;

5. ມີພຶດຕິກໍາອື່ນ ທີ່ລະເມີດຕໍ່ກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 25 ນະໂຍບາຍຕໍ່ຜູ້ມີຜົນງານ**

ພະນັກງານ ຂອງບັນດາກົມ/ທຽບເທົ່າ ພາຍໃນກະຊວງ ປທສ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍ ຕາມລະບຽບການ.

**ມາດຕາ 26 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ໄດ້ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ຖືກໂຈະ ແລະ ຖອນສິດນໍາໃຊ້, ລົງວິໄນ, ປັບໄໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

ບັນດາກົມ/ທຽບເທົ່າ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສົມທົບກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 28 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ປອ. ທັນສະໄໝ ກົມມະສິດ